*Journal of Science and Teacher Education (JLSTE), 1*(1), 84-93

# ການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI (Team-Assisted Individualization) ສໍາລັບນັກສຶກສາຄູວິທະຍາສາດການເມືອງ ປີທີ 2 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ

*ປທ. ນາງ ພຸດທະລັງສີ ໄຊຍະສອນ, ປອ. ນາງ ລັດດາວອນ ຄໍາພູວົງ*, ຊອ. ປທ ບຸນຖ້າຍ ຄັດທະວົງ, ຊອ. ປທ ສີຖານ ຈັນທະລັງສີ, ປທ. ນາງ ອ່ອນສີ ພູມປັນຍາ*

*ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ*

## ບົດຄັດຫຍໍ້

ການສຶກສາຄົ້ນຄວ້າໃນຄັ້ງນີ້ ມີຈຸດປະສົງ (1) ເພື່ອຫາດັດສະນີປະສິດທິຜົນທາງການຮຽນຮູ້ ວິຊາຫຼັກເສດຖະສາດ ຂອງນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີ 2 ພາຍຫຼັງໄດ້ຮຽນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ແລະ (2) ເພື່ອສຶກສາຄວາມເພິ່ງພໍໃຈຕໍ່ການຮຽນວິຊາຫຼັກເສດຖະສາດ; ໂດຍໃຊ້ວິທີການຄົ້ນຄວ້າແບບທົດລອງສອນໃນຫ້ອງຮຽນ ແລະ ທົດສອບ 0ne Group pre-test post-test Design; ກຸ່ມທົດລອງແມ່ນນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີ 2 ຈໍານວນ 30 ຄົນ, ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າປະກອບມີ: (1) ບົດສອນທີ່ນໍາໃຊ້ເທັກນິກການສອນແບບ (TAI) ເຂົ້າໃນການຮຽນ-ການສອນວິຊາຫຼັກເສດຖະສາດ ຈໍານວນ 4 ບົດ, (2) ແບບທົດສອບວັດຜົນການຮຽນວິຊາຫຼັກເສດຖະສາດ ຊະນິດຂໍ້ສອບແບບເລືອກຕອບ 4 ຕົວເລືອກ ແລະ (3) ແບບສອບຖາມຄວາມເພິງພໍໃຈຕໍ່ການຮຽນ-ການສອນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ແບບມາດຕາສ່ວນປະມານຄ່າ 5 ລະດັບ; ໂດຍມີຄ່າຂອງຄວາມສອດຄ່ອງ (0.66-1.00), ຄ່າຄວາມຍາກງ່າຍ (0.66-0.81), ຄ່າອໍານາດຈໍາແນກ (0.30-0.47), ຄ່າຄວາມເຊື່ອໝັ້ນແບບທົດສອບ 0,82 ແລະ ຄວາມເຊື່ອໝັ້ນຄວາມເພິງພໍໃຈ 0,86. ການວິເຄາະຂໍ້ມູນແມ່ນ ໃຊ້ໂປຣແກຣມຄອມພິວເຕີສໍາເລັດຮູບ ໃນການຄໍານວນຫາຄ່າດັດສະນີປະສິດທິຜົນ (E.I) ແລະ ຄໍານວນຫາຄ່າການວັດຄວາມເພິງພໍໃຈ ໂດຍການຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ. ຜົນການຄົ້ນຄວ້າພົບວ່າ ດັດຊະນີປະສິດທິຜົນຄວາມກ້າວໜ້າທາງການຮຽນຮູ້ຂອງນັກຮຽນ (E.I) ໃນການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ມີຄ່າເທົ່າ 0.8125 ສະແດງວ່າ ນັກຮຽນມີຄວາມຮູ້ເພີ່ມຂຶ້ນ 0.8125 ຫຼື ຄິດເປັນສ່ວນຮ້ອຍເທົ່າກັບ 81.25 ສ່ວນຮ້ອຍ ແລະ ຄວາມເພິງພໍໃຈຂອງນັກຮຽນ ຕໍ່ກັບການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ໂດຍລວມມີຄວາມເພິງພໍໃຈຢູ່ໃນລະດັບຫຼາຍ.

***ຄໍາສັບສໍາຄັນ:*** *ເທັກນິກການສອນແບບກຸ່ມຮ່ວມມື (TAI), ປະສິດທິຜົນການຮຽນຂອງນັກຮຽນ, ຄວາມເພິງພໍໃຈຂອງນັກຮຽນ*

---

**ຕິດຕໍ່ພົວພັນ: ລັດດາວອນ ຄໍາພູວົງ ;ໂທ: 020 99885850; ອີເມວ: l.khamphouvong@nuol.edu.la*

# The Teaching-Learning Principle of Economics by Using TAI Technique for Year Two Political Science Teacher Students at the Department of Social Science, Faculty of Education, National University of Laos

*Phoutthalungsy Sayasone, Latdavone Khamphouvong*, Bounthay Khatthavong, Sithan Chanthalungsy, Onsy Phoumpanya*
*Faculty of Education, National University of Laos*

## Abstract

This study aimed to determine the effectiveness index of students' learning using the Team-Assisted Individualization (TAI) technique; and to examine students' satisfaction with the application of the TAI technique in teaching and learning the Principles of Economics. Thirty political science teacher students from one class in the Department of Social Science, Faculty of Education, were used as the experimental group. The research instruments consisted of three components: lesson plans, pre- and post-experimental evaluation forms to assess students' success, and a satisfaction questionnaire for teaching and learning using the TAI technique in Principles of Economics, based on a five-level Likert scale. The consistency value ranged from 0.66 to 1.00, the difficulty value from 0.66 to 0.81, the discrimination power value from 0.30 to 0.47, the reliability test value was 0.82, and both the satisfaction confidence value and the satisfaction reliability value were 0.86. The SPSS program was used to analyze the effectiveness index (EI) of students' learning and their satisfaction, using the mean and standard deviation (S.D). The study found that the effectiveness index for teaching and learning Principles of Economics using the TAI technique was 0.8125, indicating that students' learning progress increased by 81.25%. Additionally, the study revealed that students' overall satisfaction with the teaching and learning process using the TAI technique was at a high level.

***Key words:*** *Team-Assisted Individualization (TAI) technique, effective index of learning, students' satisfaction.*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ອີງຕາມແຜນຍຸດທະສາດການສ້າງຄູແຕ່ ປີ 2006-2015 ເຊິ່ງມີຈຸດມຸ່ງໝາຍເພື່ອເຮັດໃຫ້ການສຶກສາມີຄຸນນະພາບດີຂຶ້ນ ແລະ ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະ ກິດ-ສັງຄົມໃນແຕ່ລະໄລຍະເຮັດໃຫ້ຄູມີແນວຄິດຄຸນ ສົມບັດດີ, ມີຄວາມຮັບຜິດຊອບສູງ, ມີຄວາມຊຳນິຊຳນານໃນດ້ານວິຊາສະເພາະ, ມີຈັນຍາບັນ ແລະ ມີຄວາມມຸ່ງໝັ້ນທີ່ຈະສຳເລັດໃນພາລະກິດທາງດ້ານວິຊາສະເພາະຂອງຕົນ. ການພັດທະນາຄູຕ້ອງໃຫ້ສອດຄ່ອງກັບ 3 ລັກສະນະ, 5 ຫຼັກມູນຂອງການສຶກສາ ແລະ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ແຜນປະຕິບັດງານການສຶກສາເພື່ອທຸກຄົນ, ໃນນັ້ນ ແມ່ນຕອບສະໜອງຄູໃຫ້ຄົບຊຸດ, ພຽງພໍ ແລະ ແຈກຢາຍໃຫ້ທົ່ວເຖິງ ຕາມຄວາມຮຽກຮ້ອງຕ້ອງການການຂະຫຍາຍຕົວຂອງວຽກງານການສຶກສາ. ເອົາໃຈໃສ່ໃຫ້ຄູໄດ້ມີເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກໃນການເຮັດໜ້າທີ່ການສອນເຮັດໃຫ້ຄູກາຍເປັນສ່ວນສຳຄັນໃນການຕັດສິນຄຸນນະພາບການສຶກສາ, ຮັບປະກັນໃຫ້ຄູໄດ້ຮັບການຍົກລະ ດັບໃຫ້ເປັນລະບົບຕໍ່ເນື່ອງ ແລະ ໃຫ້ຄູສາມາດຍົກລະດັບວິຊາຊີບຕາມສາຍວິຊາສະເພາະຂອງຕົນສູງຂຶ້ນເລື້ອຍໆ, ເຮັດໃຫ້ຄູກາຍເປັນຄູທີ່ຊຳນິຊຳນານຢ່າງແທ້ຈິ່ງຍົກສະຖານະພາບຂອງຄູໃຫ້ສູງຂຶ້ນດ້ວຍການປັບປຸງຄຸນນະພາບດ້ານວິຊາຊີບ (ກະຊວງສຶກສາທິການ ແລະ ກິລາ, 2001).

ໃນປັດຈຸບັນນີ້ ແມ່ນຢູ່ໃນຊ່ວງຂອງການພັດທະ ນາການສຶກສາ ສະນັ້ນ, ຈິ່ງເຫັນວ່າ ຄູໄດ້ນຳເອົາວິທີສອນ ແລະ ເຕັກນິກການສອນຕ່າງໆປະກອບເຂົ້າໃນການຮຽນ-ການສອນ, ໂດຍສະເພາະການສອນແບບເອົາຄູເປັນໃຈກາງເຊິ່ງໄດ້ປ່ຽນແທນດ້ວຍການນຳໃຊ້ວິທີສອນແບບເອົານັກຮຽນເປັນໃຈກາງ ຈຸດປະສົງແມ່ນເພື່ອເຮັດໃຫ້ນັກຮຽນມີສ່ວນຮ່ວມໃນການປະຕິບັດກິດຈະກຳຫຼາຍກວ່າການອະທິບາຍຂອງຄູ. ເຊິ່ງວິທີສອນແບບເອົານັກຮຽນເປັນໃຈກາງ ແມ່ນປະກອບດ້ວຍຫຼາຍວິທີ ແລະ ຫຼາຍເທັກນິກເຊັ່ນ: ເທັກນິກການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື, ເຊິ່ງຮູບແບບການຈັດກິດຈະກຳການຮຽນແບບກຸ່ມຮ່ວມມືທີ່ນິຍົມໃຊ້ທົ່ວໄປໃນປັດຈຸບັນມີ 8 ຮູບແບບຄື: ກິດຈະກຳກຸ່ມຮ່ວມມື STAD, ກິດຈະກຳກຸ່ມຮ່ວມມື LT, ກິດຈະກຳກຸ່ມຮ່ວມມື TGT, ກິດຈະກຳກຸ່ມຮ່ວມມື Jigsaw, ກິດຈະກຳກຸ່ມຮ່ວມມື GI, ກິດຈະກຳກຸ່ມຮ່ວມມື CIRC, ກິດຈະກຳກຸ່ມຮ່ວມມື CI ແລະ ກິດຈະກຳກຸ່ມຮ່ວມມື TAI (ທິດສະນາ ແຂມມະນີ, 2544, ໜ້າ. 102).

ການຈັດການຮຽນ-ການສອນແບບກຸ່ມຮ່ວມມື TAI ເປັນວິທີການຈັດການຮຽນຮູ້ທີ່ເນັ້ນໃສ່ການຈັດໃຫ້ຜູ້ຮຽນໄດ້ຮຽນຮູ້ຮ່ວມກັນເປັນກຸ່ມເຊິ່ງຈະປະກອບດ້ວຍສະມາຊິກທີ່ມີຄວາມສາມາດແຕກຕ່າງກັນໂດຍຈະມີຄົນເກັ່ງ, ປານກາງ ແລະ ອ່ອນຢູ່ໃນກຸ່ມ, ໃນການເຮັດກິດຈະກຳສະມາຊິກໃນກຸ່ມຈະຕ້ອງຊ່ວຍເຫຼືອເຊິ່ງກັນ ແລະກັນ ການໃຊ້ຂະບວນການກຸ່ມນີ້ຈະຊ່ວຍຫຼຸດພາລະການສອນຂອງຄູ, ນັກຮຽນມີໂອກາດເຝິກຝົນຕົນເອງຊ່ວຍເຫຼືອກັນສິ່ງຜົນໃຫ້ຄົນຮຽນອ່ອນ, ປານກາງ ຮຽນດີຂຶ້ນ ແລະ ການຈັດການຮຽນຮູ້ຮ່ວມກັນຜູ້ຮຽນຢ່າງມີຄວາມ ສຸກ, ຜົນງານທີ່ສຳເລັດຂອງກຸ່ມເປັນຜົນງານຂອງທຸກຄົນ (ວິມົນລັດ ສູນທອນໂລດ, 2550 ໜ້າ. 32-33).

ການຈັດກິດຈະກຳການຮຽນ-ການສອນ ໂດຍໃຊ້ກິດຈະກຳກຸ່ມຮ່ວມມື TAI ເປັນເທັກນິກໜຶ່ງທີ່ມີຄວາມສຳຄັນຕໍ່ການພັດທະນາການຮຽນ-ການສອນທັງສາຂາວິຊາວິທະຍາສາດທຳມະຊາດ ແລະ ວິທະຍາສາດສັງຄົມທັງໃນລະບົບສາມັນສຶກສາ ແລະ ລະບົບການສຶກສາວິຊາຊີບ. ວິຊາຫຼັກເສດຖະສາດກໍເປັນວິຊາໜຶ່ງທີ່ນອນໃນລະ ບົບການສຶກສາວິຊາຊີບ, ເຊິ່ງ

ກະຊວງສຶກສາທິການ ແລະ ກິລາໄດ້ເອົາວິຊາດັ່ງກ່າວເຂົ້າໃນຫຼັກສູດການສອນລະດັບປະລິນຍາຕີ, ທັງເປັນວິຊາຫຼັກຂອງຫຼັກສູດການຮຽນ-ການສອນ ສາຂາຄູວິທະຍາສາດການເມືອງຂອງຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດ. ວິຊາຫຼັກເສດຖະ ສາດມີເນື້ອໃນເວົ້າເຖິງທິດສະດີການຜະລິດ, ຄວາມຕ້ອງການຊື້ສິນຄ້າ, ການສະໜອງສິນຄ້າ, ການຊົມໃຊ້ ແລະ ກົດເກນເສດຖະກິດ, ຄວາມສົມດູນທາງດ້ານລາຄາໃນທ້ອງຕະຫຼາດ. ເຊິ່ງເນື້ອໃນທັງໝົດຂອງວິຊາຫຼັກເສດ ຖະສາດແມ່ນລ້ວນແຕ່ເປັນພື້ນຖານທາງທິດສະດີແຫ່ງການຜະລິດ ແລະ ເປັນຄວາມຕ້ອງການຊື້ ແລະ ຊົມໃຊ້ສິນຄ້າ. ຈິ່ງຖືໄດ້ວ່າເປັນວິຊາຮຽນທີ່ຕິດພັນກັບທຳມະຊາດຂອງຄົນໃນການຊົມໃຊ້ວັດຖຸສິ່ງຂອງ ຫຼື ປັດໄຈສີ່ຂອງຄົນ ອັນເຊິ່ງໄດ້ມາຈາກການຜະລິດ, ເຊິ່ງເປັນສິ່ງທີ່ຄົນເຮົາພົບເຫັນ, ສັງເກດ ແລະ ໃຊ້ປະໂຫຍດໄດ້ໃນຊີວິດປະຈຳວັນ. ແຕ່ໃນຕົວຈິງແລ້ວການຈັດການຮຽນ-ການສອນວິຊາ ຫຼັກເສດຖະສາດ ສ່ວນໃຫຍ່ແມ່ນມີລັກສະນະນາມມະທຳອັນເປັນເຫດເຮັດໃຫ້ຜູ້ຮຽນຈຳນວນຫຼາຍບໍ່ສາມາດຄິດ ຫຼື ເບິ່ງເຫັນພາບໃນບໍລິບົດນັ້ນໄດ້ຢ່າງຊັດເຈນ ຈິ່ງນຳໄປສູ່ການຂາດຄວາມເຂົ້າໃຈ, ເກີດຄວາມເບື່ອໜ່າຍ ແລະ ມີທັດສະນະຄະຕິທີ່ບໍ່ດີຕໍ່ວິຊານີ້. ສະນັ້ນ, ໃນການສອນ ຫຼັກເສດຖະສາດຄູບໍ່ຄວນບັນ ຍາຍແຕ່ຜູ້ດຽວ ເພື່ອນັກຮຽນຈະໄດ້ລົງມືປະຕິບັດດ້ວຍຕົນເອງ, ຫາຄຳຕອບດ້ວຍຕົນເອງ, ຮູ້ຈັກຖາມສົນທະນາ ແລະ ຊອກຫາວິທີຕ່າງໆ ອັນເປັນແນວທາງນຳໄປສູ່ການຄິດວິເຄາະ, ສາມາດເຂົ້າໃຈ ແລະ ອາດພາບໄດ້ວ່າສິ່ງໃດຈະເກີດຂຶ້ນ.

ຈາກການປະເມີນຜົນສຳເລັດທາງການຮຽນ ວິຊາຫຼັກເສດຖະສາດໃນສົກຮຽນຜ່ານມາ ເຫັນວ່າຜົນການຮຽນຂອງນັກສຶກສາຍັງຕໍ່າ ສະແດງອອກຄື ຄະແນນສອບເສັງຈົບໜ່ວຍກິດຂອງນັກສຶກສາຈຳນວນໜຶ່ງຍັງມີເກຣດ D ແລະ F, ນີ້ກໍເນື່ອງຈາກວ່າ ຄູຜູ້ສອນຍັງຂາດການພັດທະນາເທັກນິກການສອນຂອງຕົນ ເຊັ່ນ: ຄູເປັນຜູ້ບັນຍາຍເປັນຫຼັກ ເຮັດໃຫ້ຜູ້ຮຽນຊິນເຄີຍກັບການອາໄສຄູເປັນຜູ້ສະໜອງຂໍ້ມູນໃຫ້, ນັກຮຽນບໍ່ຄ່ອຍມີໂອກາດໄດ້ຖາມ-ສົນທະນາ ແລະ ບໍ່ຄ່ອຍໄດ້ເຝິກປະຕິບັດດ້ວຍຕົນເອງຈິ່ງນຳໄປສູ່ການຂາດຄວາມເຂົ້າໃຈ ແລະ  ເກີດຄວາມເບື່ອໜ່າຍຕໍ່ການຮຽນ. ສະນັ້ນ, ເພື່ອເປັນການພັດທະນາຂະບວນການຈັດການຮຽນ-ການສອນໃຫ້ມີປະສິດທິພາບ, ໂດຍສະເພາະແມ່ນການສອນວິຊາຫຼັກເສດຖະສາດທີ່ມີເນື້ອໃນຕິດພັນກັບຊີວິດປະຈຳວັນຄູຄວນນຳໃຊ້ເທັກນິກການສອນທີ່ເນັ້ນໃຫ້ກຸ່ມຜູ້ຮຽນໄດ້ເຝິກປະຕິບັດ, ແລກປ່ຽນຄວາມຄິດເຫັນ ແລະ ຊ່ວຍ ເຫຼືອເຊິ່ງກັນ ແລະ ກັນ ເພື່ອໃຫ້ບັນລຸເປົ້າໝາຍທີ່ກຳນົດໄວ້ຮ່ວມກັນ. ສະນັ້ນ, ຜູ້ຄົ້ນຄວ້າຈິ່ງມີຄວາມສົນໃຈຢາກ ນຳເອົາເທັກນິກການຈັດກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມື (Team-Assisted Indivi-dualization:TAI), ມາໃຊ້ໃນການຮຽນ-ການສອນວິຊາຫຼັກເສດຖະສາດ ເພາະເປັນວິທີທີ່ສາມາດພັດທະນາສັກກາຍະພາບຂອງຜູ້ຮຽນ ແລະ ຍັງເປັນການສ້າງບັນຍາກາດໃນຫ້ອງຮຽນ, ກຸ່ມຜູ້ຮຽນໄດ້ປຶກສາຫາລືຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຊ່ວຍເສີມສ້າງຄວາມເພິ່ງພໍໃຈໃນການຮຽນ ແລະ ເຮັດໃຫ້ປະສິດທິຜົນຂອງການຮຽນດີຂຶ້ນ.

*1.2. ຄຳຖາມຄົ້ນຄວ້າ*

1) ດັດຊະນີປະສິດທິຜົນຂອງການຮຽນວິຊາຫຼັກເສດຖະສາດຂອງນັກສຶກສາ ສາຂາຄູວິທະຍາສາດການ ເມືອງ ປີ 2 ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ຢູ່ໃນລະດັບໃດ ?

2) ຄວາມເພິ່ງພໍໃຈຕໍ່ການຮຽນວິຊາຫຼັກເສດຖະ ສາດຂອງນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີ2 ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ຢູ່ໃນລະດັບໃດ ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1) ເພື່ອຫາດັດຊະນີປະສິດທິຜົນທາງການຮຽນຮູ້ ວິຊາຫຼັກເສດຖະສາດ ຂອງນັກສຶກສາ ສາຂາຄູວິທະຍາ ສາດການເມືອງ ປີ 2 ພາຍຫຼັງໄດ້ຮຽນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI).

2) ເພື່ອສຶກສາຄວາມເພິ່ງພໍໃຈຕໍ່ການຮຽນວິຊາຫຼັກເສດຖະສາດ ຂອງນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີ 2 ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI).

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

*2.1 ການຈັດກິດຈະກຳການຮຽນ-ການສອນແບບກຸ່ມຮ່ວມມື*

ລັກສະນະການສອນແບບ TAI (slavin, 1990, ໜ້າ. 109-112) ໄດ້ອະທິບາຍໄວ້ດັ່ງນີ້:

1) ການຈັດກຸ່ມ ແບ່ງອອກເປັນກຸ່ມລະ 4-5 ຄົນ.

2) ການທົດສອບເພື່ອການຮຽນເນື້ອໃນທີ່ເໝາະສົມໃນການເລີ່ມຕົ້ນຂອງການຮຽນ ນັກຮຽນແຕ່ລະຄົນຈະຖືກທົດສອບກ່ອນຮຽນ ເພື່ອກວດສອບຄວາມເໝາະສົມໃນການຮຽນເນື້ອໃນ.

3) ເນື້ອໃນຈຸດປະສົງຫຼັກ ຫຼັງຈາກຜູ້ສອນ ໄດ້ສອນໝົດບົດຮຽນແລ້ວ ຜູ້ຮຽນຈະເຮັດວຽກໃນກຸ່ມຂອງຕົນເອງໂດຍມີສື່ ຫຼື ຈຸດປະສົງຫຼັກສູດການສອນດ້ວຍຕົນເອງທີ່ຄວບຄຸມເນື້ອໃນ ເຊິ່ງຈະຢູ່ໃນຮູບແບບເຝິກທັກສະໂດຍມີສ່ວນປະກອບດັ່ງນີ້:

4) ເອກະສານແນະນຳບົດຮຽນເປັນໜ້າທີ່ອະທິ ບາຍທັກສະທີ່ຈະຕ້ອງເຝິກ ແລະໃຫ້ວິທີການແກ້ໄຂບັນ ຫາເຮັດແບບເປັນຂັ້ນຕອນ.

5) ແບບທົດສອບປະກອບບັນຫາປະມານ 16 ຂໍ້ ໂດຍຈະເລີ່ມການແນະນຳທັກສະຍ່ອຍໆ ທີ່ຈະນຳໄປສູ່ຄວາມສາມາດໃນການພັດທະນາການຮຽນຮູ້ທັກສະທັງໝົດ.

6) ແບບທົດສອບຍ່ອຍ ປະກອບແບບສອບສອບຖາມຄຳຖາມ 10 ຂໍ້.

7) ແບບທົດສອບປະຈຳໜ່ວຍການຮຽນມີຈຳນວນ 15 ຂໍ້.

8) ແຜ່ນຄຳຕອບແບບເຝິກທັກສະ, ແບບທົດສອບຍ່ອຍ ສ່ວນແຜນຄຳຕອບຂອງແບບທົດສອບລວມປະຈຳບົດຈະແຍກອອກໄປຕ່າງຫາກ.

9) ການຮຽນເປັນກຸ່ມ ນັກຮຽນຈະເລີ່ມເຝິກທັກ ສະຕາມລະດັບຂັ້ນຕອນທີ່ກຳນົດໄວ້ຂອງບົດຮຽນໂດຍຈະເຮັດແບບເຝິກທັກສະພາຍໃນກຸ່ມຕາມລຳດັບດັ່ງນີ້:

- ສະມາຊິກແຕ່ລະກຸ່ມຈະຈັບຄູ່ກັນເພື່ອກວດສອບເຊິ່ງກັນ ແລະ ກັນ.

- ນັກຮຽນສຶກສາເອກະສານແນະນຳບົດຮຽນ ແລະ ຖາມຄູໄດ້ຫາກເກີດຄວາມບໍ່ເຂົ້າໃຈ.

- ນັກຮຽນແຕ່ລະຄົນເລີ່ມເຮັດແບບເຝິກທັກສະຈາກໂຈດບັນຫາເທື່ອລະຂັ້ນຕອນແລ້ວໃຫ້ເພື່ອນຮ່ວມທີມກວດຄຳຕອບໃຫ້ຕາມບັດລະສະເລ່ຍດ້ານຫຼັງຂອງແບບຝຶກທັກສະ ຖ້າພົບວ່າ ຜູ້ຮຽນບໍ່ຜ່ານໃນຂໍ້ໃດກຸ່ມຈະຕ້ອງຊ່ວຍກັນອະທິບາຍ ຫຼື ສອນໃຫ້ເຂົ້າໃຈກ່ອນທີ່ຈະຖາມຄູຈົນກວ່າຈະຜ່ານແລ້ວຈິ່ງເຮັດແບບຝຶກທັກສະລະດັບຕໍ່ໄປ.

ເມື່ອນັກຮຽນທັງກຸ່ມເຮັດແບບເຝິກທັກສະໄດ້ຖືກຕ້ອງຄົບແລ້ວ ຕໍ່ໄປຄູຈະໃຫ້ນັກຮຽນເຮັດບົດທົດສອບຍ່ອຍ 10 ຂໍ້ ນັກຮຽນຕ້ອງໃຫ້ຜ່ານ 8 ຂໍ້ ໃນ 10 ຂໍ້ ຖ້າບໍ່ຜ່ານຜູ້ສອນຈະຕ້ອງເຂົ້າໄປຊ່ວຍເຫຼືອກວດສອບບັນຫາແລ້ວແກ້ໄຂບັນຫາຈົນກວ່າຜູ້ຮຽນຈະເຂົ້າໃຈແລ້ວຈິ່ງໃຫ້ຜູ້ຮຽນທີ່ສອບບໍ່ຜ່ານເຮັດແບບທົດສອບຍ່ອຍອີກເທື່ອໜຶ່ງ.

ນັກຮຽນຈະໄດ້ໄປຮັບເອົາແບບທົດສອບປະຈຳໜ່ວຍຈາກຫົວໜ້າກຸ່ມ, ຫົວໜ້າກຸ່ມຈະເປັນຜູ້ບັນທຶກຄະແນນລົງໃນແຜນສະຫຼຸບປະຈຳກຸ່ມ ແລະ ນຳຄະແນນຜົນການສອບສົ່ງໃຫ້ຄູນຳໄປປຽບທຽບກັບຄະແນນມາດ ຕະຖານຂອງແຕ່ລະບຸກຄົນ ແລະ ແຕ່ລະກຸ່ມຕໍ່ໄປ.

ຄະແນນກຸ່ມ ແລະ ຄວາມສຳເລັດຂອງກຸ່ມ ມື້ສຸດທ້າຍແຕ່ລະອາທິດຄູລວບລວມຄະແນນກຸ່ມເຊິ່ງໄດ້ຈາກການນຳເອົາຄະແນນທີ່ສະມາຊິກແຕ່ລະຄົນໄດ້ຮັບຈາກການເຮັດແບບທົດສອບປະຈຳໜ່ວຍມາຫາຄະແນນສະເລ່ຍຂອງກຸ່ມ. ເກນການໃຫ້ລາງວັນແບ່ງເປັນ 3 ລະ ດັບຄື: ກຸ່ມທີ່ໄດ້ຄະແນນສູງສຸດເປັນກຸ່ມຊະນະເລີດ, ກຸ່ມທີ່ໄດ້ຄະແນນປານກາງເປັນກຸ່ມຮອງຊະນະເລີດ ແລະ ກຸ່ມທີ່ໄດ້ຄະແນນໜ້ອຍເປັນກຸ່ມດີ, ກຸ່ມຊະນະເລີດ ແລະ ຮອງຊະນະເລີດໄດ້ຮັບໃບຍ້ອງຍໍເປັນລາງວັນ.

ການສອນກຸ່ມຍ່ອຍທຸກໆ ມື້ຄູຈະໃຊ້ເວລາ 10-15 ນາທີ ໃນການສອນກຸ່ມຍ່ອຍໂດຍເລືອກນັກຮຽນຈາກກຸ່ມຕ່າງໆ ທີ່ຮຽນເນື້ອໃນດຽວກັນມາລວມກັນເພື່ອໃຫ້ຄຳແນະນຳ ຫຼື ກ່ອນການສາທິດເພື່ອໃຫ້ນັກຮຽນເປັນໄປຢ່າງຕໍ່ເນື່ອງ ແລະ ກົງກັບວັດຖຸປະສົງ ແລະ ເຂົ້າ ໃຈຄວາມຄິດລວມຍອດທີ່ສຳຄັນຂອງການຮຽນນັ້ນໆ ສ່ວນນັກຮຽນຄົນອື່ນໆ ກໍປະຕິບັດໜ້າທີ່ຂອງຕົນເອງໄປເລື້ອຍໆ.

ການທົດສອບຂໍ້ແທ້ຈິງຈະເຮັດທົດລະ 2 ເທື່ອໃຊ້ເວລາເທື່ອລະ 3 ນາທີ ໂດຍນັກຮຽນຈະຮັບເອົາເອກະ ສານເພື່ອໃຫ້ກຽມຕົວສຶກສາຢູ່ເຮືອນກ່ອນການທົດສອບ.

ການສອນຮ່ວມກັນທັງຊັ້ນ ຄູກໍຈະສະຫຼຸບບົດຮຽນໃຫ້ກັບນັກຮຽນທັງຫ້ອງໂດຍໃຫ້ຄອບຄຸມເນື້ອໃນ ແລະ ທັດສະນະຕ່າງໆຂອງບົດຮຽນ ເຊິ່ງມີຂັ້ນຕອນການສອນລຸ່ມນີ້:

- ຈັດນັກຮຽນເປັນກຸ່ມ, ກຸ່ມລະ 4-5 ຄົນປະກອບນັກກາຮຽນ (ເກັ່ງ, ກາງ, ອອ່ນ).

- ທົດສອບຈັດລະດັບຕາມຄະແນນທີ່ໄດ້.

- ນັກຮຽນສຶກສາເອກະສານແນະນຳບົດຮຽນເຮັດກິດຈະກຳຈາກທີ່ໄດ້ຮັບສຳເລັດສົ່ງໃຫ້ເພື່ອນໃນກຸ່ມກວດໂດຍມີຂໍ້ແນະນຳດັ່ງນີ້:

• ທົດສອບຍ່ອຍສະບັບ A ເປັນລາຍບຸກຄົນສົ່ງໃຫ້ເພື່ອນໃນກຸ່ມກວດ ຖ້າໄດ້ຄະແນນ 75% ຂຶ້ນໄປຖືວ່າຜ່ານ.

• ຖ້າໄດ້ຄະແນນບໍ່ເຖິງ 75% ໃຫ້ໄປຮຽນຈາກສື່ທີ່ສຶກສາໄປແລ້ວອີກເທື່ອໜຶ່ງແລ້ວທົດສອບສະບັບ B ເປັນລາຍບຸກຄົນ.

- ທົດສອບນັກຮຽນດ້ວຍແບບທົດສອບປະຈຳບົດຖ້າບໍ່ຜ່ານ 75% ຜູ້ສອນຈະພິຈາລະນາແກ້ໄຂບັນຫາອີກເທື່ອ.

- ຄູຄິດໄລ່ຄະແນນສະເລ່ຍຂອງແຕ່ລະກຸ່ມແລ້ວຈັດອັນດັບດັ່ງນີ້:

• ກຸ່ມທີ່ຜ່ານສູງໄດ້ເປັນສຸເປີ (ຍອດຢ້ຽມ)

• ກຸ່ມທີ່ຜ່ານເກນປານກາງໄດ້ເປັນ ດີຫຼາຍ

• ກຸ່ມທີ່ຜ່ານເກນຕ່ຳໄດ້ເປັນ ດີ

ທົດສະນາ ແຂມມະນີ, (2544, ໜ້າ. 98) ໄດ້ໃຫ້ຄວາມໝາຍຂະບວນການດັ່ງຕໍ່ໄປນີ້:

ຈັດຜູ້ຮຽນເຂົ້າກຸ່ມສະຫຼັບຄວາມສາມາດ (ເກັ່ງ, ກາງ, ອອ່ນ) ກຸ່ມລະ 4 ຄົນ ແລະ ເອີ້ນກຸ່ມວ່າ: ກຸ່ມບ້ານເຮົາ.

ສະມາຊິກໃນກຸ່ມບ້ານເຮົາໄປຮັບເນື້ອໃນ ແລະ ສຶກສາເນື້ອໃນຮ່ວມກັນ

ສະມາຊິກກຸ່ມບ້ານເຮົາຈັບຄູ່ກັນເຮັດແບບເຝິກຫັດ

ຖ້າໃຜເຮັດແບບເຝິກຫັດໄດ້ 75% ຂຶ້ນໄປໃຫ້ໄປເຮັດການທົດສອບລວມຍອດຄັ້ງສຸດທ້າຍໄດ້.

ຖ້າເຮັດແບບເຝິກຫັດບໍ່ໄດ້ 75% ໃຫ້ເຮັດແບບເຝິກຫັດຄືນຈົນສາມາດເຮັດໄດ້ແລ້ວຈິ່ງໄປເຮັດການທົດສອບລວມຍອດຄັ້ງສຸດທ້າຍ.

ສະມາຊິກໃນກຸ່ມບ້ານເຮົາແຕ່ລະຄົນນຳຄະແນນທົດສອບລວມຍອດມາຮວມກັນເປັນຄະແນນກຸ່ມ, ກຸ່ມໃດໄດ້ຄະແນນສູງສຸດກຸ່ມນັ້ນໄດ້ຮັບລາງວັນ.

*2.2 ທົບທວນບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ*

ສຸວັນທອນ ຍົດສະຫວັດ, ໜຽວ ສີລາວົງ, ສີສຸ ວັນ ແສງຈັນທະວົງ (2018) ໄດ້ຄົ້ນຄວ້າ ການຈັດການຮຽນ-ການສອນວິຊາພູມສາດທ່ອງທ່ຽວ ໂດຍໃຊ້ວິທີສອນແບບຮ່ວມມື TAI ຄູປະຫວັດສາດ ປີ1 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາ ໄລແຫ່ງຊາດ. ມີຈຸດປະສົງ (1) ເພື່ອສຶກສາປະສິດທິພາບຂອງບົດສອນວິຊາພູມສາດການທ່ອງທ່ຽວໂດຍໃຊ້ວິທີສອນແບບຮ່ວມມືສຳລັບນັກສຶກສາຄູປະຫວັດສາດ ປີ 1, (2) ເພື່ອສຶກສາປະສິດທິຜົນທາງຮຽນວິຊາພູມສາດການທ່ອງທ່ຽວ ໂດຍໃຊ້ວິທີສອນແບບຮ່ວມມືສຳລັບນັກສຶກສາຄູປະຫວັດສາດ ປີ1 ແລະ (3) ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຄູປະຫວັດສາດ ປີ1 ຕໍ່ການຮຽນວິຊາພູມສາດທ່ອງທ່ຽວຂອງນັກຮຽນ ພາຍຫຼັງໄດ້ຮັບການສອນວິຊາພູມສາດທ່ອງທ່ຽວໂດຍໃຊ້ວິທີສອນແບບຮ່ວມມື TAI. ຜົນການຄົ້ນຄ້ວາພົບວ່າ: (1) ປະສິດທິພາບຂອງບົດສອນໂດຍໃຊ້ວິທີສອນແບບ TAI ແມ່ນ 87.50/94.18 ສູງກວ່າເກນຕັ້ງໄວ້ 80/80, (2) ດັດສະນີປະສິດທິຜົນຂອງການຮຽນວິຊາພູມການທ່ອງທ່ຽວໂດຍນຳໃຊ້ການສອນແບບຮ່ວມມື TAI ນັກສຶກສາຄູປະຫວັດສາດ ປີ1 ແມ່ນ 0.70 ຫຼື ຄິດເປັນສ່ວນຮ້ອຍ ເທົ່າກັບ 70% ໝາຍວ່າ ນັກຮຽນມີຄວາມຮູ້ເພີ່ມຂຶ້ນ ແລະ (3) ລະດັບຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການນຳໃຊ້ວິທີສອນແບບຮ່ວມມື TAI ໃນການສອນວິຊາພູມສາດການທ່ອງທ່ຽວ ໂດຍລວມມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ.

ອ່ອນຈັນ ເພັດສະໝອນ ( 2015) ເລື່ອງ ການຈັດກິດຈະກຳໃນວົງມົນ ໂດຍໃຊ້ວິທີສອນແບບຮ່ວມມື TAI ສຳລັບອະນຸບານປີທີ 2 ລະບົບ 9+3 ທີວິທະຍາໄລຫຼວງພະບາງ. ເຊິ່ງມີຈຸດປະສົງ (1) ສຶກສາປະສິດທິພາບບົດສອນວິຊາຫຼັກການສອນອະນຸບານເລື່ອງກິດຈະກຳໃນວົງມົນ ໂດຍນຳໃຊ້ວິທີສອນແບບຮ່ວມມື TAI ສູງກວ່າເກນ 75/75, (2) ສຶກສາປະສິດທິຜົນການຮຽນຂອງນັກຮຽນໂດຍນຳໃຊ້ວິທີສອນແບບຮ່ວມມື TAI ແລະ (3) ສຶກສາຄວາມເພິ່ງພໍໃຈຂອງນັກຮຽນທີ່ມີການສອນວິຊາຫຼັກການສອນອະນຸບານເລື່ອງກິດຈະກຳໃນວົງ ມົນໂດຍນຳໃຊ້ວິທີສອນແບບຮ່ວມມື. ຜົນການຄົ້ນຄ້ວາພົບວ່າ: (1) ແຜນການສອນວິຊາຫຼັກການສອນຄູອະນຸ ບານເລື່ອງກິດຈະກຳໃນວົງມົນໂດຍການນຳໃຊ້ວິທີສອນແບບຮ່ວມມື TAI ສຳລັບອະນຸບານປີທີ2 ລະບົບ 9+3 ທີວິທະຍາໄລຫຼວງພະບາງມີປະສິດທິພາບເທົ່າກັບ 80.12/80.45, (2) ດັດສະນີປະສິດທິຜົນການຮຽນຮູ້ຂອງນັກຮຽນໂດຍນຳໃຊ້ວິທີສອນແບບຮ່ວມມື TAI ສຳລັບອະນຸບານປີທີ2 ລະບົບ 9+3 ທີ່ວິທະຍາໄລຫຼວງພະບາງເທົ່າກັບ 0.93 ຫຼື ຄິດເປັນ 93.13 ສ່ວນຮ້ອຍ ໝາຍວ່າ ນັກຮຽນມີຄວາມຮູ້ເພີ່ມຂຶ້ນ 93.13 ແລະ ຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການສອນວິຊາຫຼັກການສອນອະນຸບານເລື່ອງກິດຈະກຳໃນວົງມົນໂດຍນຳໃຊ້ວິທີສອນ ແບບຮ່ວມມື TAI ຢູ່ໃນລະດັບດີ.

ສີສຸດາ ເຕະປະໂຄນ (2555) ການພັດທະນາກິດຈະກຳການຮຽນຮູ້ແບບຮ່ວມມືເທັກນິກ TAI ກຸ່ມເນື້ອໃນການຮຽນຮູ້ຄະນິດສາດ ເລື່ອງບົດປະຍຸກຊັ້ນປະຖົມສຶກສາປີທີ 6. ການສຶກສາຄົ້ນຄ້ວາມີຈຸດປະສົງ (1) ເພື່ອພັດທະນາກິດຈະກຳການຮຽນຮູ້ແບບຮ່ວມມືເທັກນິກ TAI ກຸ່ມເນື້ອໃນການຮຽນຮູ້ຄະນິດສາດ ເລື່ອງບົດປະ ຍຸກຊັ້ນປະຖົມສຶກສາປີທີ 6 ທີ່ມີປະສິດທິພາບຕາມເກນ 75/75, (2) ເພື່ອຫາດັດສະນີປະສິດທິຜົນການຈັດກິດຈະກຳການຮຽນຮູ້ແບບຮ່ວມມືເທັກນິກ TAI ກຸ່ມເນື້ອໃນການຮຽນຮູ້ຄະນິດສາດ ຜົນການຄົ້ນຄ້ວາພົບວ່າ: (1) ແຜນການຈັດກິດຈະກຳແບບຮ່ວມມືເທັກນິກ TAI ກຸ່ມເນື້ອໃນການຮຽນຮູ້ຄະນິດສາດເລື່ອງ ບົດປະຍຸກ ຊັ້ນປະຖົມ ປີທີ 6 ຜົນການປະເມີນຄວາມເໝາະສົມຂອງການຈັດກິດຈະກຳການຮຽນຮູ້ ມີຄ່າສະເລ່ຍ 4.59 ຢູ່ໃນລະດັບຄຸນະພາບທີ່ເໝາະສົມຫຼາຍທີ່ສຸດ ແລະ ມີປະສິດທິພາບ 8.90/79.89, (2) ດັດສະນີປະສິດທິຜົນຂອງການຈັດກິດຈະກຳການຮຽນຮູ້ ແບບຮ່ວມມືເທັກນິກ TAI ເທົ່າກັບ 0.67 ມີຄວາມກ້າວໜ້າໃນການຮຽນ 67.97

## 3. ວິທີດຳເນີນການຄົ້ນຄວ້າ

ການສຶກສາຄົ້ນຄ້ວາຄັ້ງນີ້ ຜູ້ສຶກສາໄດ້ເຮັດການທົດລອງສອນໂດຍ ການຈັດການຮຽນ-ການສອນວິຊາຫຼັກເສດຖະສາດໂດຍນຳໃຊ້ວິທີສອນແບບຮ່ວມມື (Team-Assisted Individualization) ສຳລັບນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີ 2 ພາກວິຊາຄູວິ ທະຍາສາດສັງຄົມ ຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດ, ເຊິ່ງຜູ້ຄົ້ນຄວ້າໄດ້ໃຊ້ແຜນການຄົ້ນຄວ້າແບບ 0ne Group pre-test post-test Design (ຊະວະລິດ ຊູກຳແພງ, 2553) ດັ່ງນີ້:

| ຮູບແບບ | Pre-test | Treatment | Post-test |
|---|---|---|---|
| ກຸ່ມທົດລອງ | T1 | X | T2 |

T1 ແທນໃຫ້ການທົດສອບກ່ອນຮຽນ

X ແທນໃຫ້ການຈັດການຮຽນ-ການສອນໂດຍ ນຳໃຊ້ການຮຽນຮູ້ແບບຮ່ວມມື TAI

T2 ແທນໃຫ້ການທົດສອບຫຼັງຮຽນ

*3.1 ກຸ່ມທົດລອງ*

ກຸ່ມທົດລອງແມ່ນນັກສຶກສາ ສາຂາຄູວິທະຍາ ສາດການເມືອງ ປີ2 ຈຳນວນ 30 ຄົນ, ພາກຮຽນ 1 ສົກສຶກສາ 2022-

2023 ພາກວິຊາຄູວິທະຍາສາດສັງຄົມ ຄະ ນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ມີດັ່ງນີ້:

1) ບົດສອນທີ່ນຳໃຊ້ເທັກນິກການສອນແບບ (TAI) ເຂົ້າໃນການຮຽນ-ການສອນວິຊາຫຼັກເສດຖະ ສາດ ຈຳນວນ 4 ບົດ ແຕ່ລະບົດໃຊ້ເວລາຢູ່ 120 ນາທີ.

2) ແບບທົດສອບວັດຜົນການຮຽນວິຊາຫຼັກເສດ ຖະສາດ ຂອງນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີ2, ຊະນິດຂໍ້ສອບແບບເລືອກຕອບ 4 ຕົວເລືອກ ຈຳນວນ 20 ຂໍ້ ໃນ 4 ບົດສອນ, ແຕ່ລະບົດສອນມີແບບທົດສອບກ່ອນຮຽນ-ຫຼັງຮຽນ ສະບັບດຽວກັນມີຈຳນວນ 55ຂໍ້, ໃບກິດຈະກຳລະຫວ່າງຮຽນ, ແບບປະເມີນທັກສະລະຫວ່າງຮຽນໃນການປະຕິບັດກິດຈະກຳ ແລະ ແບບທົດສອບຜົນສຳເລັດທາງການຮຽນຫຼັງຈາກຮຽນຈົບ 4 ບົດສອນ ມີຈຳນວນ 20 ຂໍ້ (ຄະແນນເຕັມ 20 ຄະແນນ).

3) ແບບສອບຖາມຄວາມເພິ່ງພໍໃຈຕໍ່ການຮຽນ-ການສອນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ເຂົ້າໃນການສອນວິຊາຫຼັກເສດຖະສາດ ຂອງນັກສຶກສາຄູວິທະຍາສາດການເມືອງ ປີ2 ແບບມາດຕາສ່ວນປະມານຄ່າ 5 ລະດັບ ຈຳນວນ 20 ຂໍ້.

*3.3 ວິທີເກັບກຳຂໍ້ມູນ*

ຜູ້ຄົ້ນຄວ້າໄດ້ດຳເນີນການທົດລອງດ້ວຍການເກັບຂໍ້ມູນໂດຍນຳບົດສອນມາດຳເນີນການສອນກັບນັກສຶກສາຄູວິທະຍາສາດການເມືອງ ປີ2 ພາກວິຊາຄູວິທະຍາ ສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດເຊິ່ງມີຂັ້ນຕອນດັ່ງນີ້:

1) ນຳໜັງສືອະນຸຍາດເກັບຂໍ້ມູນຈາກຄະນະບໍດີ ຄະນະສຶກສາສາດ ໄປຍັງພາກວິຊາວິທະຍາສາດສັງຄົມເພື່ອຂໍເກັບຂໍ້ມູນນຳສາຂາວິຊາຄູວິທະຍາສາດການເມືອງ

2) ການດຳເນີນການສອນແມ່ນທົດສອບກ່ອນຮຽນກັບນັກສຶກສາຄູວິທະຍາສາດການເມືອງ ປີ2 ຈຳນວນ 30 ຄົນ ໂດຍໃຊ້ແບບທົດສອບທີ່ຜູ້ຄົ້ນຄວ້າສ້າງຂຶ້ນ 20 ຂໍ້ ໃນ 4 ບົດສອນ, ບົດສອນລະ 5 ຂໍ້ .

3) ຜູ້ຄົ້ນຄວ້າດຳເນີນການສອນ 4 ບົດສອນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ໃນວິ ຊາຫຼັກເສດຖະສາດໃນເລື່ອງ: ບົດສອນທີ 1 ອຸປະສົງ (ຄວາມຕ້ອງການ); ບົດສອນທີ 2 ອຸປະທານ (ການສະໜອງ); ບົດສອນທີ 3 ກົນໄກລາຄາ ແລະ ລາຄາສົມດູນ ແລະ ບົດສອນທີ 4 ພຶດຕິກຳຂອງຜູ້ບໍລິໂພກ.

4) ຜູ້ຄົ້ນຄວ້າທົດສອບຫຼັງຮຽນກັບນັກສຶກສາຄູວິທະຍາສາດການເມືອງ ປີ 2 ຈຳນວນ 30 ຄົນ ໂດຍໃຊ້ບົດທົດສອບດຽວກັນກັບກ່ອນຮຽນໃນ 4 ບົດສອນ, ບົດສອນລະ 5 ຂໍ້ ລວມ 20 ຂໍ້.

5) ທົດສອບຜົນສຳເລັດທາງການຮຽນຫຼັງຈາກຮຽນຈົບ 4 ບົດສອນແລ້ວ ແລະ ນຳເອົາແບບວັດຄວາມເພິ່ງພໍໃຈມາສອບຖາມກັບນັກສຶກສາຄູວິທະຍາສາດການເມືອງ ປີ 2 ຈຳນວນ 30 ຄົນ

6) ນຳແບບທົດສອບມາກວດໃຫ້ຄະແນນ ແລະ ແບບສອບຖາມຄວາມເພິ່ງພໍໃຈເພື່ອນຳຂໍ້ມູນໄປວິເຄາະ.

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

***ການວິເຄາະຂໍ້ມູນ:*** ຜູ້ຜູ້ຄົ້ນຄວ້າໄດ້ດຳເນີນການວິເຄາະຂໍມູນ ທີ່ໄດ້ຈາກການທົດລອງໂດຍໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບ ດັ່ງນີ້:

- ຄຳນວນຫາຄ່າດັດສະນີປະສິດທິຜົນ (E.I) ເພື່ອຫາຄ່າດັດສະນີປະສິດທິຜົນ ຂອງຄວາມກ້າວໜ້າທາງດ້ານການພັດທະນາທາງການຮຽນ ຂອງນັກສຶກສາປີ 2 ສາຂາຄູວິທະຍາສາດການເມືອງ;

- ຄຳນວນຫາຄ່າການວັດຄວາມເພິ່ງພໍໃຈຂອງນັກ ສຶກສາຄູວິທະຍາສາດການເມືອງ ປີ 2 ທີ່ມີຕໍ່ການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍໃຊ້ການສອນແບບການຮຽນຮູ້ແບບກຸ່ມຮ່ວມມື (TAI), ໂດຍການຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ.

***ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ:***

- **ຫາຄ່າສະເລ່ຍ** ($\bar{X}$: Mean) ໂດຍໃຊ້ສູດຄິດໄລ່

$$\bar{X} = \frac{\sum X}{N}$$

- **ຄ່າຜັນປ່ຽນມາດຖານ** (S.D. Standard Deviation) (ສົມນຶກ ພັດທິຍະທານີ, 2552)

$$\mathrm{S.D} = \sqrt{\frac{N\sum X^2 - (\sum X)^2}{N(N-1)}}$$

- **ສະຖິຕິວິເຄາະຄຸນນະພາບຂອງເຄື່ອງມື**

ໂດຍໃຊ້ສູດ ດັດສະນີຄວາມສອດຄ່ອງ IOC ດັ່ງນີ້

$$\mathrm{IOC} = \frac{\sum R}{N}$$

-**ສະຖິຕິຄຳນວນຫາດັດສະນີປະສິດທິຜົນ** (Effectiveness Index: E.I) ເພື່ອຫາຄ່າ ຂອງຄວາມກ້າວໜ້າທາງດ້ານການພັດທະນາທາງການຮຽນ (ສົມນຶກ ພັດທິຍາທານີ, 2552, ໜ້າ. 117).

$$\mathrm{E.I} = \frac{p_2 - p_1}{Total - p_1}$$

- **ສະຖິຕິຫາຄ່າຄວາມຍາກງ່າຍ** (P) **ຂອງແບບທົດສອບທີ່ສ້າງຂັ້ນລາຍຂໍ້** (ບຸນຊົມ ສີສະອາດ, 2554, ໜ້າ. 97-99)

$$P = \frac{R}{N}$$

- **ວິເຄາະຫາຄ່າອຳນາດຈຳແນກຂອງແບບທົດສອບ**

(ບຸນເຊີດ ພິໂນອະນັນຕະພົງ, 1989, ໜ້າ. 83-84)

$$r = \frac{P_H - P_L}{n}$$

**ຊອກຫາຄວາມເຊື່ອໝັ້ນຂອງແບບທົດສອບ**

ໃຊ້ສູດ Kuder-Richardson (ອ້າງໃນ ວິຊິດ ສຸຣັດ ເຣືອງໄຊ, 2551) ເຊິ່ງມີ 2 ສູດຄື: KR-20 KR-21 , ເຊິ່ງໃນບົດຄົ້ນຄວ້ານີ້ ໄດ້ໃຊ້ສູດ KR-20 ເຊິ່ງສູດ KR-20 ໃຊ້ໄດ້ກັບເຄື່ອງມື ທີ່ໃຫ້ຄະແນນ 0-1.

$$r_{tt} = \frac{k}{k-1}\left\{1 - \frac{\sum p_i q_i}{S_x^2}\right\}$$

ຄະແນນ ຜູ້ຖືກທົດສອບທັງໝົດ ໂດຍໃຊ້ສູດ

$$s_x^2 = \frac{n\Sigma \times^{2-} (\Sigma\times)^2}{n(n-1)}$$

**- ຊອກຫາຄ່າຄວາມເຊື່ອໝັ້ນຂອງແບບວັດຄວາມເພິ່ງພໍໃຈ** ໂດຍໃຊ້ α ຂອງ Cronbach (ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ, 2543) ດັ່ງນີ້:

$$\propto = \frac{n}{n-1}\left\{1 - \frac{\Sigma S_i^2}{S_t^2}\right\}$$

## 4. ຜົນການຄົ້ນຄວ້າ

*4.1 ຜົນວິເຄາະປະສິດທິຜົນຂອງຄວາມກ້າວໜ້າທາງດ້ານການພັດທະນາທາງການຮຽນຂອງນັກສຶກສາ*

ຜູ້ຄົ້ນຄວ້າໄດ້ວິເຄາະຄ່າດັດສະນີປະສິດທິຜົນທາງການຮຽນຂອງນັກສຶກສາໃນການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ຈາກຄະແນນທົດສອບວັດຜົນສໍາເລັດກ່ອນການຮຽນ ແລະ ຫຼັງການຮຽນຂອງນັກສຶກສາ, ເຊິ່ງຜົນການວິເຄາະສະແດງອອກຄື: ການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ສໍາລັບນັກສຶກສາຄູການເມືອງ ປີ2 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມີຄ່າດັດສະນີປະສິດທິຜົນຄວາມກ້າວໜ້າທາງການຮຽນຮູ້ຂອງນັກຮຽນ (E.I) ເທົ່າ 0.8125 ສະແດງວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນ 0.8125 ຫຼື ຄິດເປັນສ່ວນຮ້ອຍເທົ່າກັບ 81.25 ສ່ວນຮ້ອຍ.

*4.2 ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການນໍາໃຊ້ວິທີສອນແບບຮ່ວມມື TAI*

ຄວາມເພິ່ງພໍໃຈຂອງນັກຮຽນ ຕໍ່ກັບການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ໂດຍລວມມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ($\bar{X}$=4.00, S.D=0.08). ເມື່ອພິຈາລະ ນາໃນແຕ່ລະດ້ານເຫັນວ່າ ດ້ານທີ່ມີຄ່າສະເລ່ຍສູງແມ່ນ ດ້ານການຈັດກິດຈະກໍາການຮຽນ-ການສອນ ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ($\bar{X}$=4.04, S.D=0.16), ຮອງລົງມາແມ່ນດ້ານສື່ການຮຽນ-ການສອນ ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ($\bar{X}$=4.04, S.D=0.18), ສ່ວນດ້ານທີ່ມີຄ່າສະເລ່ຍຕໍ່າແມ່ນດ້ານເນື້ອໃນການຮຽນຮູ້ ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ($\bar{X}$=3.90, S.D=0.17)

## 5. ອະພິປາຍຜົນ

ຜົນການວິເຄາະຂໍ້ມູນທີ່ໄດ້ຈາກການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື (TAI) ສໍາລັບນັກສຶກສາຄູການເມືອງ ປີ2 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມີຄ່າດັດສະນີປະສິດທິຜົນຄວາມກ້າວໜ້າທາງການຮຽນຮູ້ຂອງນັກຮຽນ (E.I) ເທົ່າ 0.8125 ສະແດງວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນ 0.8125 ຫຼື ຄິດເປັນສ່ວນຮ້ອຍເທົ່າກັບ 81.25 ສ່ວນຮ້ອຍ. ເນື່ອງຈາກວ່າ ນັກຮຽນໄດ້ຮຽນຮູ້ ແລະ ການປະຕິບັດກິດຈະກໍາຕາມແຜນການສອນແບບຮ່ວມມື TAI ເປັນການຈັດການຮຽນແບບກຸ່ມຍ່ອຍ ສະຫຼັບຄວາມສາມາດກຸ່ມລະ 5-6 ຄົນ ເຊິ່ງຜູ້ຮຽນໄດ້ເລີ່ມຈາກການທວນຄືນຄວາມຮູ້ເດີມໄປສູ່ຄວາມຮູ້ໃໝ່, ຜູ້ຮຽນແຕ່ລະຄົນເຮັດໃບກິດຈະກໍາ ແລ້ວຈັບຄູ່ກັນພາຍໃນກຸ່ມເພື່ອແລກປ່ຽນຄວາມຮູ້ ເຊິ່ງກັນ ແລະ ກັນ ພ້ອມກວດກາຄວາມຖືກຕ້ອງ; ຜູ້ຮຽນເຮັດໄດ້ຖືກຕ້ອງ 75 ສ່ວນຮ້ອຍ ຂຶ້ນໄປ, ຖ້າຜູ້ຮຽນເຮັດໃບກິດຈະກໍາບໍ່ເຖິງ 75 ສ່ວນຮ້ອຍ ໃຫ້ຜູ້ຮຽນເຮັດໃບກິດຈະກໍາຄືນໃໝ່ຈົນກວ່າຈະເຮັດໄດ້ເຖິງ 75 ສ່ວນຮ້ອຍ ຂຶ້ນໄປຈຶ່ງຜ່ານໄດ້; ອີກປະການໜຶ່ງ ຜູ້ຮຽນທຸກຄົນເຮັດການທົດສອບ, ນໍາຜົນຄະແນນທົດສອບຂອງແຕ່ລະຄົນມາລວມເປັນຄະ ແນນກຸ່ມ, ກຸ່ມທີ່ໄດ້ຄະແນນສູງສຸດໄດ້ຮັບລາງວັນອີກ; ໃນການທົດລອງນີ້ ຜູ້ຮຽນສາມາດປະຕິບັດໄດ້ເຖິງ 81.25 ສ່ວນຮ້ອຍ. ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າ ສຸວັນທອນ ຍົດສະຫວັດ, ໜຽວ ສີລາວົງ, ສີສຸວັນ ແສງຈັນທະວົງ, (2018) ໄດ້ຄົ້ນຄວ້າ ການຈັດການຮຽນ-ການສອນວິຊາພູມສາດທ່ອງທ່ຽວ ໂດຍໃຊ້ວິທີສອນແບບຮ່ວມມື TAI ຄູປະຫວັດສາດ ປີ1 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາ ໄລແຫ່ງຊາດ. ຜົນການຄົ້ນຄ້ວາພົບວ່າ: ດັດສະນີປະສິດທິຜົນຂອງການຮຽນວິຊາພູມການທ່ອງທ່ຽວໂດຍນໍາໃຊ້ການສອນແບບຮ່ວມມື TAI ນັກສຶກສາຄູປະຫວັດ ສາດ ປີ1 ແມ່ນ 0.70 ຫຼື ຄິດເປັນສ່ວນຮ້ອຍ ເທົ່າກັບ 70% ໝາຍວ່າ ນັກຮຽນມີຄວາມຮູ້ເພີ່ມຂຶ້ນ 70. ສອດ ຄ່ອງກັບຜົນການຄົ້ນຄວ້າຂອງ ຊາດຊາຍ ເນື່ອງໂນລາດ (2549) ການພັດທະນາແຜນກິດຈະກໍາການຮຽນຮູ້ແບບຮ່ວມມືເທັກນິກ TAI ກຸ່ມເນື້ອໃນການຮຽນຮູ້ສິລະປະເລື່ອງເນື້ອໃນດົນຕີ ຊັ້ນມັດທະຍົມປີທີ1 ໂຮງຮຽນຍາງຕະລາດວິທະຍາຄານ ຜົນການຄົ້ນຄວ້າພົບວ່າ ດັດສະນີປະສິດທະຜົນ ມີຄ່າເທົ່າກັບ 0.77 ຫຼື ຄິດເປັນສ່ວນຮ້ອຍເທົາ 77 ສ່ວນຮ້ອຍ ໝາຍວ່ານັກຮຽນມີຄວາມຮູ້ເພີ່ມຂຶ້ນ 77 ສ່ວນຮ້ອຍ. ສອດຄ່ອງກັບ ອ່ອນຈັນ ເພັດສະໝອນ (2015) ເລື່ອງ ການຈັດກິດຈະກໍາໃນວົງມົນ ໂດຍໃຊ້ວິທີສອນແບບຮ່ວມມື TAI ສໍາລັບອະນຸບານ ປີທີ2 ລະບົບ

9+3 ທີ່ວິທະຍາໄລຫຼວງພະບາງ ຜົນການຄົ້ນຄວ້າພົບວ່າ ດັດສະນີປະສິດທິຜົນການຮຽນຮູ້ຂອງນັກຮຽນໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ສໍາລັບອະນຸບານ ປີທີ2 ລະບົບ 9+3 ທີ່ວິທະຍາໄລຫຼວງພະບາງ ມີຄ່າເທົ່າກັບ 0.9313 ຫຼື ຄິດເປັນສ່ວນຮ້ອຍ ເທົ່າກັບ 93.13 ສ່ວນຮ້ອຍ ໝາຍວ່າ ນັກຮຽນມີຄວາມຮູ້ເພີ່ມຂຶ້ນ 93.13 ສ່ວນຮ້ອຍ. ຜົນການຄົ້ນຄວ້າກົງກັນຂ້າມກັບຜົນການຄົ້ນຄວ້າຂອງ ສີສຸດາ ເຕະປະໂຄນ, (2555) ການພັດທະນາກິດຈະກໍາການຮຽນຮູ້ແບບຮ່ວມມືເທັກນິກ TAI ກຸ່ມເນື້ອໃນການຮຽນຮູ້ຄະນິດສາດ ເລື່ອງບົດປະ ຍຸກຊັ້ນປະຖົມສຶກສາ ປີທີ6. ຜົນການຄົ້ນຄວ້າພົບວ່າ ດັດສະນີປະສິດທະຜົນການຈັດກິດຈະກໍາການຮຽນຮູ້ ແບບຮ່ວມມືເທັກນິກ TAI ມີຄ່າເທົ່າກັບ 0.67 ຫຼື ຄິດເປັນສ່ວນຮ້ອຍ ເທົ່າກັບ 67.97 ສ່ວນຮ້ອຍ ໝາຍວ່າ ມີຄວາມກ້າວໜ້າໃນການຮຽນຮູ້ເພີ່ມຂຶ້ນ 67.97 ສ່ວນຮ້ອຍ. ກົງກັນຂ້າມກັບຜົນການຄົ້ນຄວ້າຂອງ ສົມຈິດ ເດດຄອບ (2552) ການພັດທະນາກິດຈະກໍາການຮຽນຮູ້ກຸ່ມຮ່ວມມືແບບ TAI ເລື່ອງປະໂຫຍດກຸ່ມເນື້ອໃນການຮຽນຮູ້ພາສາໄທ ຊັ້ນປະຖົມສຶກສາ ປີທີ2 ຜົນການຄົ້ນ ຄວ້າພົບວ່າ: ດັດສະນີປະສິດທະຜົນການຈັດກິດຈະກໍາການຮຽນຮູ້ແບບຮ່ວມມືເທັກນິກ TAI ມີຄ່າເທົ່າ 0.73 ຫຼື ຄິດເປັນສ່ວນຮ້ອຍ 73.00 ສ່ວນຮ້ອຍ ໝາຍວ່າ ມີຄວາມກ້າວໜ້າໃນການຮຽນຮູ້ເພີ່ມຂຶ້ນ 73.00 ສ່ວນຮ້ອຍ.

ຜົນການວິເຄາະຂໍ້ມູນຄວາມເພິ່ງພໍໃຈຂອງນັກ ຮຽນ ຕໍ່ກັບການຈັດການຮຽນ-ການສອນວິຊາຫຼັກເສດ ຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື (TAI) ໂດຍ ລວມຜູ້ຮຽນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ. ເນື່ອງຈາກວ່າ ໃນແຕ່ລະດ້ານການຈັດການຮຽນ-ການສອນ ໂດຍນໍາໃຊ້ວິທີສອນແບບຮ່ວມມື (TAI) ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທຸກດ້ານຄື: ດ້ານການຈັດກິດຈະກໍາການຮຽນ-ການສອນ, ດ້ານສື່ການຮຽນ-ການສອນ, ດ້ານວັດ ແລະ ປະເມີນຜົນ ແລະ ດ້ານເນື້ອໃນການຮຽນຮູ້ ລ້ວນແຕ່ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ. ເຊິ່ງສະ ແດງອອກໃນດ້ານເນື້ອໃນການຮຽນຮູ້ ເຫັນວ່າ ເນື້ອໃນບົດຮຽນ ສາມາດຊ່ວຍໃຫ້ມີການແກ້ໄຂບັນຫາພື້ນຖານພຶດຕິກໍາຜູ້ບໍລິໂພກ, ເປັນເນື້ອໃນທີ່ຕິດພັນ ແລະ ສາ ມາດນໍາໄປໝູນໃຊ້ໃນຊີວິດປະຈໍາວັນ ແລະ ສາມາດຊ່ວຍໃຫ້ມີການແກ້ໄຂບັນຫາພື້ນຖານທາງດ້ານເສດຖະກິດ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ; ດ້ານການຈັດກິດຈະກໍາການຮຽນ-ການສອນ ເຫັນວ່າ ການໄດ້ມີໂອກາດອະທິບາຍ ແລະ ຖາມໝູ່ເພື່ອນໃນກຸ່ມ, ໄດ້ມີໂອກາດແລກປ່ຽນຄວາມຮູ້ເຊິ່ງກັນ ແລະກັນ ແລະ ການປະຕິບັດກິດຈະກໍາເປັນກຸ່ມຮ່ວມກັບໝູ່ເພື່ອນ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ; ດ້ານສື່ການຮຽນ-ການສອນເຫັນວ່າ ສື່ ແລະ ອຸປະກອນທີ່ໃຊ້ໃນການຮຽນ-ການສອນຊ່ວຍສົ່ງເສີມໃນການສົນທະນາ ແລະ ສອບຖາມບົດຮຽນຫຼາຍຂຶ້ນ, ຊ່ວຍສະຫຼຸບບົດຮຽນໄດ້ງ່າຍ ແລະ ຖືກປະເດັນ ແລະ ຊ່ວຍໃຫ້ຜູ້ຮຽນເຂົ້າໃຈຄວາມຄິດລວມຍອດຫຼາຍຂຶ້ນ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະ ດັບຫຼາຍ; ດ້ານວັດ ແລະ ປະເມີນຜົນ ເຫັນວ່າ ການປະເມີນຈາກການນໍາສະເໜີຜົນງານກຸ່ມ, ການປະເມີນລະ ຫວ່າງການປະຕິບັດກິດຈະກໍາການຮຽນ-ການສອນ ແລະ ການປະເມີນຂອງຕົນເອງ ແລະ ໝູ່ເພື່ອນ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ເປັນຕົ້ນ. ຜົນການຄົ້ນຄວ້າສອດຄ່ອງກັບຜົນການຄົ້ນຄວ້າຂອງ ສຸວັນທອນ ຍົດສະຫວັດ, ໜຽວ ສີລາວົງ, ສີສຸວັນ ແສງຈັນທະວົງ, (2018) ໄດ້ຄົ້ນຄວ້າ ການຈັດການຮຽນ-ການສອນວິຊາພູມສາດທ່ອງທ່ຽວ ໂດຍໃຊ້ວິທີສອນແບບຮ່ວມມື TAI ຄູປະ ຫວັດສາດ ປີ1 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ. ຜົນການຄົ້ນຄ້ວາພົບວ່າ: ລະດັບຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການນໍາໃຊ້ວິທີສອນແບບຮ່ວມມື TAI ໃນການສອນວິຊາພູມສາດການທ່ອງທ່ຽວ ໂດຍລວມມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ. ສອດຄ່ອງກັບຜົນການຄົ້ນຄວ້າຂອງ ຊາດຊາຍ ເນື່ອງໂນລາດ (2545) ການພັດທະນາແຜນການຈັດກິດຈະກໍາການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກ TAI ກຸ່ມເນື້ອໃນການຮຽນຮູ້ສິລະປະ ເລື່ອງເນື້ອໃນດົນຕີ ຊັ້ນມັດທະຍົມສຶກສາ ປີທີ 1 ໂຮງຮຽນຍາງຕະລາດວິທະຍາຄານ ຜົນການຄົ້ນຄວ້າພົບວ່າ ຄວາມເພິ່ງພໍໃຈໃນການຮຽນຮູ້ແບບຮ່ວມມື ໂດຍໃຊ້ເທັກນິດ TAI ໂດຍລວມມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທີ່ສຸດ. ສອດຄ່ອງກັບຜົນການຄົ້ນຄວ້າຂອງ ສົມຈິດ ເດດຄອບ (2552) ການພັດທະນາການຈັດກິດຈະກໍາການຮຽນຮູ້ກຸ່ມຮ່ວມມືແບບ TAI ເລື່ອງປະໂຫຍດກຸ່ມເນື້ອໃນການຮຽນຮູ້ພາສາໄທ ຊັ້ນມັດທະຍົມສຶກສາປີທີ2. ຜົນການຄົ້ນຄວ້າພົບວ່າ ຄວາມເພິ່ງພໍໃຈໃນການຮຽນຮູ້ແບບຮ່ວມມື ໂດຍໃຊ້ເທັກນິດ TAI ໂດຍລວມມີຄວາມເພິ່ງພໍໃຈໃນລະດັບດີ. ສອດຄ່ອງກັບຜົນການຄົ້ນຄວ້າຂອງ ອ່ອນຈັນ ເພັດສະໝອນ (2015) ເລື່ອງ ການຈັດກິດຈະກໍາໃນວົງມົນ ໂດຍໃຊ້ວິທີສອນແບບຮ່ວມມື TAI ສໍາລັບອະນຸບານ ປີທີ2 ລະບົບ 9+3 ທີ່ວິທະຍາໄລຫຼວງພະບາງ. ຜົນການຄົ້ນຄວ້າພົບວ່າ ຄວາມເພິ່ງພໍໃຈໃນການຮຽນຮູ້ແບບຮ່ວມມື ໂດຍໃຊ້ເທັກນິດ TAI ໂດຍລວມມີຄວາມເພິ່ງພໍໃຈໃນລະດັບດີ.

## 6. ສະຫຼຸບຜົນການຄົ້ນຄວ້າ

ການສຶກສາຄົ້ນຄວ້າໃນຄັ້ງນີ້ເປັນການສຶກສາກ່ຽວກັບການນໍາໃຊ້ວິທີສອນແບບຮ່ວມມື TAI ນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີທີ2 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ. ມີຈຸດປະສົງ (1) ເພື່ອຫາດັດສະນີປະສິດທິຜົນທາງການຮຽນຮູ້ ວິຊາຫຼັກເສດຖະສາດ ຂອງນັກສຶກສາ ສາຂາຄູວິທະຍາສາດການເມືອງ ປີ 2 ພາຍ ຫຼັງໄດ້ຮຽນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ແລະ (2) ເພື່ອສຶກສາຄວາມເພິ່ງພໍໃຈຕໍ່ການຮຽນວິຊາຫຼັກເສດຖະສາດ ຂອງນັກສຶກສາ ສາຂາຄູວິທະ ຍາສາດການເມືອງ ປີ2

ພາຍຫຼັງໄດ້ຮຽນ ໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI). ໂດຍໃຊ້ວິທີການ ຄົ້ນຄວ້າແບບທົດລອງສອນໃນຫ້ອງຮຽນ ແລະ ທົດສອບ 0ne Groum pre-test post-test Design; ກຸ່ມທົດລອງແມ່ນນັກສຶກສາ ສາຂາຄູວິທະຍາສາດການ ເມືອງ ປີ2 ຈໍານວນ 30 ຄົນ, ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າປະກອບມີ: (1) ບົດສອນທີ່ນໍາໃຊ້ເທັກນິກການສອນແບບ (TAI) ເຂົ້າໃນການຮຽນ-ການສອນວິຊາຫຼັກເສດຖະສາດ ຈໍານວນ 4 ບົດ, (2) ແບບທົດສອບວັດຜົນການຮຽນວິຊາຫຼັກເສດຖະສາດ ຊະນິດຂໍ້ສອບແບບເລືອກຕອບ 4 ຕົວເລືອກ ແລະ (3) ແບບສອບຖາມຄວາມເພິງພໍໃຈຕໍ່ການຮຽນ-ການສອນໂດຍໃຊ້ຮູບແບບການຮຽນຮູ້ແບບກຸ່ມຮ່ວມມື (TAI) ເຂົ້າໃນການສອນວິຊາຫຼັກເສດຖະສາດ ແບບມາດຕາສ່ວນປະມານຄ່າ 5 ລະດັບ; ການວິເຄາະຂໍ້ມູນ ທີ່ໄດ້ຈາກການທົດລອງ ໂດຍໃຊ້ໂປຣແກຣມຄອມພິວເຕີສໍາເລັດຮູບ ຄື: ການຄໍານວນຫາຄ່າດັດສະນີປະສິດທິຜົນ (E.I) ແລະ ຄໍານວນຫາຄ່າການວັດຄວາມເພິງພໍໃຈ ໂດຍການຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຖານ.

ຜົນການຄົ້ນຄວ້າການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ສໍາລັບນັກສຶກສາຄູວິທະຍາສາດການເມືອງ ປີ2 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສະຫຼຸບໄດ້ດັ່ງນີ້:

1) ດັດສະນີປະສິດທິຜົນຄວາມກ້າວໜ້າທາງການຮຽນຮູ້ຂອງນັກຮຽນ (E.I) ການຈັດການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ສໍາລັບນັກສຶກສາຄູວິທະຍາສາດການເມືອງ ປີ2 ພາກວິຊາຄູວິທະຍາສາດສັງຄົມ ຄະນະສຶກສາສາດ ມີຄ່າເທົ່າ 0.8125 ສະແດງວ່າ ນັກຮຽນມີຄວາມຮູ້ເພີ່ມຂຶ້ນ 0.8125 ຫຼື ຄິດເປັນສ່ວນຮ້ອຍເທົ່າກັບ 81.25 ສ່ວນຮ້ອຍ.

2) ຄວາມເພິງພໍໃຈຂອງນັກຮຽນ ຕໍ່ກັບການຈັດ ການຮຽນ-ການສອນວິຊາຫຼັກເສດຖະສາດ ໂດຍນໍາໃຊ້ວິທີສອນແບບຮ່ວມມື TAI ໂດຍລວມມີຄວາມເພິງພໍໃຈຢູ່ໃນລະດັບຫຼາຍ.

## 7. ຂໍ້ສະເໜີແນະ

*7.1 ຂໍ້ສະເໜີແນະ ສໍາລັບການນໍາເອົາວິທີສອນແບບ (TAI) ໄປໃຊ້*

1) ໃນການນໍາການສອນແບບຮ່ວມມື TAI ໄປໃຊ້ໃນການເຮັດກິດຈະກໍາການຮຽນ-ການສອນໃຫ້ເກີດປະສິດທິພາບສູງສຸດຄູຜູ້ສອນຕ້ອງສຶກສາຄວາມເຂົ້າໃຈ ແລະ ປຶກສາຜູ້ຮູ້ເພື່ອໃຫ້ສາມາດຈັດກິດຈະກໍາໃນການຮຽນ-ການສອນຕາມການສອນແບບຮ່ວມມື TAI ໄດ້ຢ່າງຖືກຕ້ອງ ແລະ ເກີດປະໂຫຍດຕໍ່ນັກຮຽນ.

2) ຄູຕ້ອງສຶກສາກິດຈະກໍາແຕ່ລະຂັ້ນຕອນໃຫ້ລະອຽດຖີ່ຖ້ວນ, ກວດຄວາມຖືກຕ້ອງແຕ່ລະຂັ້ນຕອນ ກ່ອນນໍາມາໃຊ້ກັບນັກຮຽນ

3) ຄູສອນຄວນນໍາບົດສອນດ້ວຍວິທີສອນແບບຮ່ວມມື TAI ໄປໃຊ້ໃນການຈັດກິດຈະກໍາການຮຽນ-ການສອນຢ່າງຕໍ່ເນື່ອງເພື່ອຝຶກທັກສະນັກຮຽນໃຫ້ເກີດປະສິດທິຜົນ.

*7.2 ຂໍ້ສະເໜີແນະສໍາລັບການສຶກສາຄົ້ນຄວ້າຄັ້ງຕໍ່ໄປ*

1) ຄວນຈັດກິດຈະກໍາການຮຽນ-ການສອນແບບຮ່ວມມື TAI ໃນວິຊາອື່ນ ແລະ ສາຍຄູອື່ນ ຫຼືວິທະຍາ ໄລອື່ນໆ ເພື່ອປຽບທຽບຜົນການຮຽນຂອງນັກຮຽນ.

2) ຄວນສຶກສາປຽບທຽບການຈັດກິດຈະກໍາການຮຽນ-ການສອນແບບຮ່ວມມື TAI ກັບວິທີສິດສອນແບບອື່ນໆ.

## 8. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2001). *ແຜນຍຸດທະສາດ 20 ປີ (2001-2020) ແລະ 10 ປີ (2001-2010).* ນະ ຄອນຫຼວງວຽງຈັນ: ພິມທີ່ ລັດວິສາຫະກິດໂຮງພິມສຶກສາ.

ສີສຸດາ ເຕະປະໂຄນ. (2555). *ການພັດທະນາກິດຈະກໍາການຮຽນຮູ້ແບບຮ່ວມມືເທັກນິກ TAI ກຸ່ມສາລະການຮຽນຮູ້ຄະນິດສາດເລື່ອງ ບົດປະຍຸກ ຊັ້ນປະຖົມປີທີ 6.* ສາຂາຫຼັກສູດ ແລະ ການສອນ: ມະຫາວິທະຍາໄລມະຫາສາລະຄາມ.

ສຸວັນທອນ ຍົດສະຫວັດ, ໜຽວ ສີລາວົງ, ສີສຸວັນ ແສງຈັນທະວົງ. (2018). *ໄດ້ຄົ້ນຄວ້າ ການຈັດການຮຽນ-ການສອນວິຊາພູມສາດທ່ອງທ່ຽວ ໂດຍໃຊ້ວິທີສອນແບບຮ່ວມມື TAI ຄູປະຫວັດສາດ ປີ 1 ພາກວິຊາຄູວິທະຍາສາດສັງ ຄົມ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.* ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ, ມະຫາວິທະຍາ ໄລແຫ່ງຊາດ.

ສົມຈິດ ເດດຄອບ. (2552). *ການພັດທະນາກິດຈະກໍາການຮຽນຮູ້ກຸ່ມຮ່ວມມື TAI ເລື່ອງປະໂຫຍກກຸ່ມສາລະການຮຽນຮູ້ພາສາໄທ ຊັ້ນປະຖົມສຶກສາປີທີ 2, ສາຂາວິຊາຫຼັກສູດແ ແລະ ການສອນ.* ມະຫາວິທະຍາໄລມະຫາສາລະຄາມ: ມະຫາສາລະຄາມ.

ສົມນຶກ ພັດທິຍາທານີ. (2552). *ການວັດຜົນການສຶກສາ.* ກາລະສິນ: ປະສານການພິມ.

ຊະວະລິດ ຊູກໍາແພງ. (2553). *ການວິໄຈຫຼັກສູດ ແລະ ການສອນ.* ກຸງເທບ: ສຸວິລິຍະສານ.

ຊາດຊາຍ ເນື່ອງໂນລາດ. (2545). *ຫຼັກການສອນສໍາລັບການເປັນຄູມືອາຊີບ.* ກຸງເທບມະຫານະຄອນ: ສຸວິຣິຍະສານ ການພິມ.

ທິດສະນາ ແຂມມະນີ. (2544). *ສາດການສອນໃນອົງຄວາມຮູ້ເພື່ອຈັດການຂະບວນການຮຽນຮູ້ທີ່ມີປະສິດທິພາບ.* ກຸງເທບ: ຈຸລາລົງກອນ ມະຫາວິທະຍາໄລ.

ບຸນຊົມ ສີສະອາດ. (2554). *ການວິໄຈເບື້ອງຕົ້ນ,ພິມຄັ້ງທີ 9.* ກຸງເທບມະຫານະຄອນ: ສຸວິຣິຍະສານ.

ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ. (2543). *ເທັກນິກການວັດຜົນການຮຽນຮູ້.* ກຸງເທບ: ສຸວິຣິຍະສານ ການພິມ.

ວິຊິດ ສຸຣັດເຣືອງໄຊ. (2551). *ການວິໄຈແບບປະຕິບັດການໃນຄຣຸສຶກສາ1.* ຄະນະສຶກສາສາດ ມະຫາວິທະຍາໄລບູລະພາ.

ວິມົນລັດ ສູນທອນໂລດ. (2550). *ນະວັດຕະກຳຕາມແນວຄິດແບບ Backward Design*. ກຸງເທບ: ຊ້າງທອງ.

ອ່ອນຈັນ ເພັດສະໝອນ. (2015). *ການຈັດການຮຽນ-ການສອນເລື່ອງການຈັດກິດຈະກຳໃນວົງມົນໂດຍໃຊ້ວິທີສອນແບບຮ່ວມມື TAI ສໍາລັບ ສາຍອະນຸບານ ປີທີ 2 ລະບົບ 9+3 ທີ່ວິທະຍາໄລຫຼວງພະບາງ.* ຄະນະສຶກສາສາດ: ມະຫາວິທະຍາໄລແຫ່ງຊາດລາວ.

slavin,R.E. (1990). *Cooperative.* research and pactice.New jer sey: prentice-Hall,Inc.